ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ - ໄຟຟ້າລາວ ມະຫາຊົນ

ເລກທີ. 0957 /ຜ-ຟຟລ.

ນະຄອນຫຼວງວຽງຈັນ, ວັນທີ 27 MAR 2025

ນະໂຍບາຍດ້ານສິ່ງແວດລ້ອມ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ), ເປັນບໍລິສັດທີ່ຜະລິດ, ຮ່ວມຫຸ້ນ ແລະ ສົ່ງຈ່າຍພະລັງງານໄຟຟ້າ ລວມທັງການບໍລິຫານຈັດການດ້ານການນຳໃຊ້ໄຟຟ້າ ເພື່ອຮອງຮັບການພັດທະນາເສດຖະກິດ-ສັງຄົມ ຂອງປະເທດ, ໂດຍມີຈຸດປະສົງພັດທະນາພະລັງງານໄຟຟ້າຄວບຄູ່ໄປກັບການພັດທະນາອົງກອນ ໃຫ້ເປັນຜູ້ນຳດ້ານການອະນຸລັກພະລັງງານ ແລະ ຮັກສາສິ່ງແວດລ້ອມ, ຈຶ່ງກຳນົດນະໂຍບາຍຕໍ່ກັບຄວາມຮັບຜິດຊອບທາງດ້ານສິ່ງແວດລ້ອມ ສັງຄົມ ເພື່ອເປັນແນວທາງການຈັດຕັ້ງປະຕິບັດ ດັ່ງນີ້:

1. ສົ່ງເສີມໃຫ້ທຸກໜ່ວຍງານປະຕິບັດຕາມລະບຽບມາດຕະຖານ ແລະ ຂໍ້ກຳນົດດ້ານສິ່ງແວດລ້ອມຢ່າງເຄັ່ງຄັດ.
2. ເລືອກໃຊ້ເທັກໂນໂລຊີທີ່ທັນສະໄໝ ແລະ ສະອາດໃນການພັດທະນາພະລັງງານໄຟຟ້າ ໃຫ້ສາມາດຢູ່ຮ່ວມກັບຊຸມຊົນຢ່າງປອດໄພ ແລະ ເປັນມິດກັບສິ່ງແວດລ້ອມ.
3. ສະໜັບສະໜຸນສົ່ງເສີມທຸກໆໂຮງຜະລິດພະລັງງານໄຟຟ້າຂອງ ຜ-ຟຟລ ສ້າງລະບົບການຈັດການທາງດ້ານສິ່ງແວດລ້ອມ ຕາມມາດຕະຖານສາກົນ ແລະ ຈັດຕັ້ງປະຕິບັດຢ່າງຕໍ່ເນື່ອງ.
4. ສະໜັບສະໜຸນສົ່ງເສີມວຽກງານສຶບເຊື່ອຄາບອນ ເພື່ອເປັນການຫລຸດຜ່ອນທາດອາຍພິດເຮືອນແກ້ວ ເຊິ່ງເປັນການແກ້ໄຂສະພາວະໂລກຮ້ອນ ແລະ ການປ່ຽນແປງດິນຟ້າອາກາດ.
5. ເສີມສ້າງການອະນຸລັກພະລັງງານ ແລະ ຊັບພະຍາກອນທຳມະຊາດ ໃຫ້ມີການໃຊ້ພະລັງງານຢ່າງມີປະສິດຕິພາບ ທັງພາຍໃນອົງກອນ ແລະ ສັງຄົມໂດຍລວມ.
6. ສ້າງອົງກອນໃຫ້ເປັນອົງກອນສີຂຽວໂດຍເນັ້ນຫນັກການຫລຸດຜ່ອນ Carbon footprint ໂດຍການຫັນເປັນດິຈິຕອລ, ການນຳໃຊ້ລົດໄຟຟ້າ ແລະ ອື່ນໆ.
7. ປະກາດນະໂຍບາຍດ້ານສິ່ງແວດລ້ອມເຖິງພະນັກງານທັງໝົດ ຂອງ ຜ-ຟຟລ ແລະ ຜູ້ກ່ຽວຂ້ອງໃຫ້ນຳໄປໃຊ້, ຈັດຕັ້ງປະຕິບັດ ແລະ ເຜີຍແຜ່ຕໍ່ສາທາລະນະ ເພື່ອດຳເນີນຕາມແນວທາງນະໂຍບາຍສິ່ງແວດລ້ອມຂອງ ຜ-ຟຟລ ໄດ້ຢ່າງປະສິດຕິພາບ ແລະ ຕໍ່ເນື່ອງ.
8. ຄຸ້ມຄອງ, ຟື້ນຟູປ່າໄມ້ ບໍລິເວນຂອບເຂດອ່າງໂຕ່ງຂອງເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ.
9. ດຳເນີນການຊ່ວຍເຫຼືອວຽກພັດທະນາຊຸມຊົນຂອງບ້ານທີ່ຢູ່ບໍລິເວນອ້ອມຂ້າງເຂື່ອນ.

ຜູ້ອຳນວຍການໃຫຍ່

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ສຸກສະຫວາດ ໂສສຸພັນ
ຜູ້ອຳນວຍການໃຫຍ່

ຖະໜົນມິດຕະພາບ ລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ ຕູ້ ປ.ນ. 2392 ນະຄອນຫລວງວຽງຈັນ ໂທລະສັບ: (856-21) 316142
ແຟັກ: (856-21) 316141 ອີເມລ: edlgenhq@edlgen.com.la, ເວັບໄຊ: www.edlgen.com.la